# ບົດລຳເພງ (ບອດເພງ)

ໃຈຄວາມສຳຄັນ ທີ່ຮັກແພງ
ຂໍ້ຄວາມສຳຄັນ ບົດ ໒:໑໖
ຈຳນວນບົດ ໘ ບົດ

## ໑. ຄຳນຳ

ພວກເຮົາ ເຄີຍຍິນຍັນວ່າ ໜັງສືນີ້ ແມ່ນກະສັດ ຊາໂລໂມນ ເປັນຜູ້ຂຽນ ຄືເພີ່ນຂຽນເວລາເຖົ້າແລ້ວ ສ່ວນຄຳສຸພາສິດແລະໜັງສືບົດເພງຂຽນເວລາຍັງໜຸ່ມ ພວກຢູດາເອີ້ນໜັງສືນີ້ວ່າຍອດຂອງເພງທັງຫລາຍ ແລະພວກເຂົາເຄີຍອ່ານໜັງສືນີ້ຈົນສຸດເມື່ອເຖິງວັນເທສການປັສຄາ

## ໒. ວ່າດ້ວຍ ຄວາມເຫັນ ທີ່ແຕກ ຕ່າງກັນ ແລະ ການ ປຽບ ທຽບ

ກ. ເຣື່ອງກະສັດຊາໂລໂມນ ຢາກເອົາຍິງຊາວຊີຣະມິດຜູ້ນຶ່ງເປັນເມັຍນັ້ນລາງຄົນກໍຄິດວ່າເຣື່ອງນີ້ເປັນຄວາມຈິງແທ້ ແຕ່ຫາກຜູ້ຍິງຄົນນັ້ນ ບໍ່ຍອມເອົາ ເພາະນາງໄດ້ປະຕິຍານຕົນໄວ້ກັບຄົນລ້ຽງແກະຜູ້ນຶ່ງແລ້ວ

ຂ. ສ່ວນລາງຄົນ ກໍຄິດວ່າເຣື່ອງນີ້ ເປັນຄຳອຸປມາເຖິງຄວາມຮັກອັນບໍຣິສຸດຣະຫວ່າງພຣະເຈົ້າກັບຄົນທີ່ເຊື່ອ ຄືກະສັດຊາໂລໂມນກັບຄົນລ້ຽງແກະນັ້ນກໍແມ່ນຜູ້ດຽວກັນ ກະສັດຊາໂລ

ໃນນປຽບກັບພຣະເຢຊູ ສ່ວນຊາວຊີຣະມີດປຽບກັບຄົນທີ່ເຊື່ອພຣະເຢຊູ

ຄ. ສ່ວນລາງຄົນກໍຄິດວ່າ ເຣື່ອງຜູ້ສາວສີດຳ ປຽບກັບຄົນທີ່ເຊື່ອພຣະເຢຊູ ຄືຜູ້ສາວນັ້ນບໍ່ສົມຄວນຈະເຂົ້າໄປໃນພຣະຣາຊວັງຂອງກະສັດ (ລາວຮັກຜູ້ລ້ຽງແກະນັ້ນປຽບໃສ່ພຣະເຢຊູ) ແຕ່ຄົນຮັກຂອງນາງກໍເຫັນວ່ານາງມີຄຸນງາມຄວາມດີ ເຣື່ອງນີ້ປຽບກັບເສື່ອຂອງຄວາມຊອບທັມ (ບົດທີ ໔) ໃນບົດ ໕–໖ ມີເຣື່ອງຜູ້ສາວໄຂປະຕູໃຫ້ຄົນຮັກເຂົ້າມາ ຜູ້ສາວເວົ້າວ່າ "ຂ້ານ້ອຍ ເປັນຂອງທ່ານ ຜູ້ທີ່ຂ້ານ້ອຍ ຮັກຫລາຍ ແລະທ່ານຜູ້ຂ້ານ້ອຍຮັກຫລາຍກໍເປັນຂອງຂ້ານ້ອຍ" ແລະຜູ້ສາວຊອກຫາຄົນທີ່ຮັກຂອງຕົນ ເຣື່ອງນີ້ປຽບກັບຄົນທີ່ເຊື່ອຄອງຖ້າວັນສເດັດມາຂອງພຣະເຢຊູ (໕–໖,໗)

## ງ. ລັກສນະຄວາມງາມຂອງຄົນທີ່ຮັກ

໑. ໃນຄວາມງາມ ເຈົ້າກໍງາມຫລາຍ ໑:໑໕-໑໖; ໔:໑໐-໑໖

໒. ໃນຄວາມເສຣີ ຄືລູກມົ້ງ ໒:໘

໓. ໃນທາງປັນຍາ ທ່ານຈະສັ່ງສອນຂ້ານ້ອຍ ໗:໒

໔. ໃນສຽງປາກ ກໍອ່ອນຫລາຍແລະມ່ວນ ໒:໑໔

໕. ໃນຄວາມຮັກ ກໍແຂງແຮງເໝືອນກັບຄວາມຕາຍ ໗:໖–໗

## ຈ. ຜູ້ຈະເປັນເມັຍ

ໃນບົດທີ ໑:໕ ວ່າຂ້ານ້ອຍເປັນສີດຳ ໝາຍຄວາມວ່ານາງບໍ່

ເພາະລົມທີ່ຈະເຂົ້າໄປໃນພຣະຣາຊວັງຂອງກະສັດ ແຕ່ຜູ້ທີ່ຮັກຫລາຍກໍເຫັນວ່ານາງມີຄຸນງາມຄວາມດີ (ບົດ ໔) ເພາະວ່ານາງຖືກຫົ່ມໄວ້ດ້ວຍເສື້ອແຫ່ງຄວາມຊອບທັມ

## ໕. ວ່າດ້ວຍການສົບດສົບນກັບ

ໃນບົດທີ ໕ ມີຄວາມວ່າຜູ້ສາວໄດ້ໄຂປະຕູໃຫ້ບ່າວແລະນາງມີຄວາມຍິນດີຫລາຍ ນາງໄດ້ເວົ້າວ່າ "ຂ້ານ້ອຍເປັນຂອງທ່ານຜູ້ທີ່ຂ້ານ້ອຍຮັກຫລາຍແລະທ່ານຜູ້ຂ້ານ້ອຍຮັກຫລາຍກໍເປັນຂອງຂ້ານ້ອຍ" (໖:໓) ແລະ ທີ່ນາງກຳລັງຊອກຫາຜູ້ທີ່ນາງຮັກຫລາຍ ກໍອຸປມາເຖິງຄົນທີ່ໄດ້ຮັບເອົາພຣະອົງໃນໃຈແຕ່ຍັງຄອງຫາວັນສເດັດປາກົດມາຂອງພຣະອົງ (໕:໖–໘)

## ໖. ການແບ່ງເປັນພາກ

ພາກທີ ໑ ການຮັກແພງກັນຣະຫວ່າງເຈົ້າສາວແລະເຈົ້າບ່າວ — ບົດ ໑–໒:໗

ພາກທີ ໒ ເຈົ້າສາວຝັນເຫັນຜູ້ທີ່ຮັກ — ບົດ ໒:໘–໓:໕

ພາກທີ ໓ ເມື່ອເພື່ອນຝູງແຫ່ໄປແລະເມື່ອຝັນເທື່ອທີສອງກັບການລົມທະນາຣະຫວ່າງເຈົ້າບ່າວແລະເຈົ້າສາວຂອງເຢຣູຊາເລັມ — ບົດ ໓:໖–໖:໓

ພາກທີ ໔ ເຈົ້າບ່າວຍ້ອງຍໍສັຣເສີນຄວາມງາມຂອງເຈົ້າສາວແລະຄວາມຢາກໄດ້ເຈົ້າສາວ — ບົດ ໖:໔–໘:໔

ພາກທີ ໕ ເມື່ອເຈົ້າບ່າວເຈົ້າສາວຢູ່ນຳກັນແລະສແດງຄວາມຮັກຕໍ່ກັນ — ບົດ ໘:໕–໑໔